22140583

International Baccalaureate®
Baccalauréat International
Bachillerato Internacional

**LAO A: LITERATURE – STANDARD LEVEL – PAPER 1**
**LAO A : LITTÉRATURE – NIVEAU MOYEN – ÉPREUVE 1**
**LAOSIANO A: LITERATURA – NIVEL MEDIO – PRUEBA 1**

Friday 9 May 2014 (morning)
Vendredi 9 mai 2014 (matin)
Viernes 9 de mayo de 2014 (mañana)

1 hour 30 minutes / 1 heure 30 minutes / 1 hora 30 minutos

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a guided literary analysis on one passage only. In your answer you must address both of the guiding questions provided.
- The maximum mark for this examination paper is *[20 marks]*.

INSTRUCTIONS DESTINÉES AUX CANDIDATS

- N'ouvrez pas cette épreuve avant d'y être autorisé(e).
- Rédigez une analyse littéraire dirigée d'un seul des passages. Les deux questions d'orientation fournies doivent être traitées dans votre réponse.
- Le nombre maximum de points pour cette épreuve d'examen est *[20 points]*.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un análisis literario guiado sobre un solo pasaje. Debe abordar las dos preguntas de orientación en su respuesta.
- La puntuación máxima para esta prueba de examen es *[20 puntos]*.


© International Baccalaureate Organization 2014

https://xtremepape.rs/

*ໃຫ້ເຈົ້າວິຈານໃນແງ່ວັນນະຄະດີ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້*
*ໃນຄໍາຕອບເຈົ້າຕ້ອງເວົ້າເຖິງຄໍາຖາມ**ທັງສອງ**ທີ່ຂຽນໄວ້ຫລັງເລື່ອງ*

**1.**

ແຕ່ນັ້ນຊາຍໄມ້ຮ້ອຍກໍໄປທຽວໃນທໍໃນໂຮງຍົກມືຕີກອງສອງບາດສາມບາດແລ້ວກໍຫຼຽວແລໄປມາ ໃນກາລະຍາມນັ້ນ ສ່ວນອັນວ່າ ນາງຜູ້ນຶ່ງເຊິ່ງຢູ່ໃນກອງອັນພຍາຕົ້ນພໍ່ຊ້ອນໄວ້ໃນກອງສືບບ້ານ ເມືອງ ອັນວ່າຊາຍໄມ້ຮ້ອຍກໍຕີກອງດັ່ງນັ້ນ ນາງຢູ່ໃນກອງກ່າວວ່າດັ່ງນີ້ ດູຣາສັດຕູເຮີຍ ມຶງຊິກິນ ກູ ຈງກິນເສັຍເທີ້ນ ກູນີ້ຫາກເປັນຄົນຕາຍແທ້ແລພໍ່ແມ່ພີ່ນ້ອງແຫ່ງກູຫາກຕາຍເສັຍໝົດທັ້ງ ເມືອງນີ້ແລ ອັນວ່າຊາຍໄມ້ຮ້ອຍຜູ້ນັ້ນກ່າວຕອບນາງວ່າດັ່ງນີ້ ດູຣາ ທ່ານຜູ້ໃດມາຢູ່ໃນກອງ ທີ່ນີ້ຈາ ເຮົາບໍ່ໄດ້ແມ່ນຜີແລສັດເດັຍລະສານ ເຮົານີ້ກໍຫາກແມ່ນຄົນແທ້ ຊາຍໄມ້ຮ້ອຍຜູ້ນັ້ນກ່າວຕອບດັ່ງນີ້ແລ້ວກໍຫຼົງໜີຈາກກອງທີ່ນັ້ນແລ້ວເຂົ້າໄປຫາໂພທິສັດທ້າວຄັດ ທະນະກຸມມານ ກ່າວວ່າດັ່ງນີ້ ຂ້າໄຫວ້ຕົ້ນວິເສັດ ສ່ວນອັນວ່າຂ້າກໍໄປຕີກອງ ທີ່ນັ້ນສອງບາດສາມບາດແລ້ວ ຂ້າກໍໄດ້ຍິນສຽງຄົນປາກຢູ່ໃນກອງໜ່ອຍນັ້ນ ຈັກວ່າແມ່ນຜູ້ຫຍິງຫຼືຜູ້ຊາຍກໍບໍ່ຮູ້ແທ້ດີຫຼືແລ ຂໍເຈົ້າກູຈົ່ງໄປຫຼຽວດູກ່ອນເທີ້ນ ເມື່ອຊາຍໄມ້ຮ້ອຍກ່າວຕໍ່ໂພທິສັດເຈົ້າແລ້ວດັ່ງນັ້ນ ແຕ່ນັ້ນສ່ວນອັນວ່າ ໂພທິສັດເຈົ້າທ້າວຄັດທະນະກຸມມານຄັນວ່າໄດ້ຍິນຍັງຄໍາຊາຍໄມ້ຮ້ອຍກ່າວດັ່ງນັ້ນ ກໍບາຍເອົາຄ້ອນຕີຍັງດິດພິນສອງບາດສາມບາດແລ້ວ ແຕ່ນັ້ນອັນວ່ານາງຢູ່ໃນກອງ ນັ້ນກ່າວວ່າ ດູຣາງູຕົວຖ່ອຍຮ້າຍມຶງຊິກິນກູ ຈງກິນເທີ້ນ ສ່ວນອັນວ່ານາງຜູ້ນັ້ນກໍຕັ້ງຕໍ່ແຕ່ຄໍາດຽວຈັກຕາຍແທ້ດີຫຼືແລ ໃນກາລະຍາມນັ້ນ ສ່ວນອັນວ່າ ໂພທິສັດເຈົ້າໄດ້ຍິນ ກໍຮູ້ຍັງຫົວໃຈນາງອັນບໍ່ຊື່ນດັ່ງນັ້ນ ເຈົ້າກໍດີດພິນອັນມີສາຍເປັນຂອງພໍ່ທ້າວພຍານັ້ນສອງສາມບາດ ທີ່ນັ້ນສຽງພິນກໍເຂົ້າໄປໃນກອງ ນາງກໍໄດ້ຍິນສຽງພິນແລ້ວ ນາງກໍຄຶດເຖິງພໍ່ແມ່ແຫ່ງຕົນ ນາງກໍຮ້ອງໄຫ້ຈົ່ມໄປມາຢູ່ຫັ້ນແລ ແຕ່ນັ້ນທ້າວຄັດທະນະກຸມມານໂພທິສັດເຈົ້າກໍເອົາຍັງດາບສິຄັນໄຊມາຫັກໜ້າກອງ ແລ້ວເຈົ້າກໍອຸ້ມເອົານາງອອກຈາກກອງແລ້ວອົານາງໄປໃສ່ປາສາດຫໍຫຼວງອັນເປັນທີ່ແຫ່ງນາງອັນ ດ້ອຍແກ້ວແລຄໍາຫັ້ນແລ ແຕ່ນັ້ນອັນວ່າໂພທິສັດເຈົ້າກໍຖາມນາງວ່າດັ່ງນີ້ ດູຣາເຈົ້ານ້ອງຮັກພີ່ ສ່ວນອັນວ່າພຍາຕົ້ນພໍ່ແລແມ່ເຈົ້າແລຊາວບ້ານຊາວເມືອງ ທັ້ງຫຼາຍແຫ່ງເຈົ້າໄປທາງໃດ ພີ່ຈັກນໍາທີ່ນັ້ນແລ ນາງກ່າວຕໍ່ໂພທິສັດເຈົ້າວ່າດັ່ງນີ້ ຍັງມີໃນວັນນຶ່ງສ່ວນອັນວ່າງູຝາງທັ້ງຫຼາຍມັນກໍມາແຕ່ກໍາຕະວັນອອກພຸ້ນກໍອັນເປັນມືດມົນອັນຕະ ການແລຫຸ້ມກຸ້ມເອົາຍັງເມືອງອັນນີ້ກໍບໍ່ເຫັນສັງ ກາງວັນເທົ່າໄຕ້ໄຟເຈັດອັນເຈັດຄືນກໍບໍ່ເຫັນສັກ ເທື່ອແລ ແຕ່ພໍ່ແທ່າແຕ່ເອົາຂ້າຜູ້ນີ້ໄປໄວ້ໃນກອງຫັ້ນແລ ງູກໍມາກິນແລພີ່ນ້ອງຊາວບ້ານຊາວ ເມືອງທັ້ງຫຼາຍກໍໝົດ

ບໍ່ປາກົດຊື່ຜູ້ແຕ່ງ *ທ້າວຄັດທະນະກຸມມານ* (ບໍ່ປາກົດປີແຕ່ງ)

(ກ) ເລື່ອງນີ້ສະທ້ອນໃຫ້ເຫັນອີ່ຍັງແດ່ກ່ຽວກັບສັງຄົມລາວສະໄໝກ່ອນ

(ຂ) ຜູ້ຂຽນໃຊ້ສິນລະປະອີ່ຍັງແດໃນການຂຽນເລື່ອງນີ້



https://xtremepape.rs/

**2.**

ໂອນໍ ຮຽມນີ້ ດັ່ງປາຕາຍຂ້ອນ ໜອງນານ້ຳເຂີນຂາດ
ຝົນບໍ່ສົງໂຜດໃຫ້ ຕາຍແລ້ງແດດເຜົາ ແລນໍ
ຄຶດຕໍ່ດອກຄັດເຄົ້າ ບານຢູ່ກາງດົງ
ຄຶດຕໍ່ເຄືອພາຍສົງ ກໍມີລຳກ້ຽວ
ອັນນຶ່ງ ເປັນດັ່ງຟ້າຜ່າໄມ້ ລຳສ້ຽວສຽບໃຈ …
ນອນຫລັບ ຝັນເຫັນແກ້ວ ພີລາແດງຍອດດວງ ຮຽມພຸ້ນ
ສະເດັດສູ່ຫ້ອງ ໂຮງແຈ້ງສ່ອງໃສ
ຝັນວ່າຈັນທະຈອນເອົ້າ ມາຮຽງຮັດຖະບາດ …
ແສນສິ່ງໃນທອງເອົ້າ ຫົນຫວາຍຫານີ້ສວ່າງ ບໍ່ມີແລ້ວ
ເດືອນຍີ່ມາຮອດແລ້ວ ແສນຮ້ອນເຮືອໄຫລ
ຕັ້ງແຕ່ເດືອນສາມຄ້ອຍ ລະດູເດືອນສີ່ມານັ້ນ
ເມຄະຫລິນໄຫລຫລັ່ງຍ້ອຍ ຮຳໜ້າບໍ່ຂາດສາຍ
ວ່າຈັກຝົງໄຟຫລີ ກໍເປັນອັນຍາກ
ວ່າຈັກລົງແຊ່ນ້ຳ ກໍມາຮ້ອນຮຸ້ມທອງ
ມັນຫາກຂົນຂາດເອົ້າ ໃນທອງສຸດທີ່ອ່າວ ຜູ້ດຽວແລ້ວ
ເຮຮົນ ເລີຍຄັ່ງແຄ້ນ ຫານ້ອງກໍຫວັ່ງເວ
ຜັດແຕ່ເດືອນຫ້າຂຶ້ນ ຖືຄິງໄຂ້ບໍ່ສວ່າງ
ເດືອນຫົກມາຮອດແລ້ວ ໝາວຊ້ຳຕື່ມຝົນ
ເດືອນເຈັດເດືອນແປດຄວນທີ່ເອົ້າ ເດືອນເກົ່າຄວນທີ່ຮ້ອນ
ສົ່ງມາຊ້ຳຕື່ມໜາວ ເດືອນສິບເດືອນສິບເອັດຂຶ້ນ …
ປວດຫົວຖືຄິງໄຂ້ ທັງຕົວບໍ່ມີເຫື່ອ
ໃຜຜູ້ເປັນໝໍແກ້ ມີຢາອົດເຍື້ອນປົ່ວປົວແມ
ຄັນວ່າຫາຍພະຍາດຮ້ອນ ຄູນເຈົ້າບໍ່ໃຫ້ເສຍ ດອກນາ …
ປານນີ້ ດາວສະເດັດກົ້ວ ດວງແຂຊິມືດມຸ່ງ ບໍ່ມີແລ້ວ
ຫລືວ່າສຸຮິໂຍມາແລ່ນກຸ້ມ ກຸມພະຈັນມົວມືດ
ອັງຄານມາບຽດເບື້ອງ ບັງແກ້ວໜ່ວຍພະຈັນ
ໂອນໍ ພະຈັນມາແສງເສົ້າ ເສຍສີໝອງໝົ່ນ …
ປານນີ້ ດວງມະນີສ້ອຍແພງແສນສຸດທີ່ອ່າວ …
ອົດພໍກູມາເຍື້ອນ ເອົາໄມຕລີຕິດຕໍ່ ແພງເອີຍ
ຂໍຂອດພັນທະມິດໄວ້ ແສນຕື້ຢ່າໃຫ້ຫາຍ ພີ້ຖອນ
ຢ່າໄດ້ ໄລ່ຖົມຖົ້ມ ຄືໄໝເຂັນຂາດ
ຢ່າໄດ້ ເປັນທ່ອນບັ້ນ ຄືຝ້າຍຂາດໄນ ພີ່ເນີ

ບໍ່ມີຊື່ຜູ້ແຕ່ງ *ສຸດທີ່ອ່າວ* (ໜັງສືໃບລານບໍ່ຮູ້ປີແຕ່ງ)

(ກ) ກາບກອນລາວມັກຈະມີຄວາມໝາຍຫຼາຍລະດັບ ຜູ້ຂຽນຕ້ອງການສື່ອີ່ຍັງແດ່ໃຫ້ຜູ້ອ່ານ

(ຂ) ໃຫ້ເຈົ້າວິຈານການໃຊ້ສັນຍະລັກໃນເລື່ອງນີ້



https://xtremepape.rs/